# ການສັກຢາວັກຊີນໂຄວິດ-19: ຂໍ້ຄວາມກ່ຽວກັບສິ່ງທີ່ຄາດຫວັງ

ຖ້າທ່ານກຳລັບຈະຮັບ ຫຼື ຄິດທີ່ຈະຮັບຢາວັກຊີນໂຄວິດ-19, ນີ້ແມ່ນສິ່ງທີ່ທ່ານຄວນຈະຮູ້ກ່ອນ ແລະ ຫຼັງຈາກທີ່ຈະຮັບການສັກຢາ ວັກຊີນ.

ວັກຊີນແມ່ນປອດໄພ ແລະ ຈະຊ່ວຍປ້ອງກັນທ່ານຈາກໂຄວິດ-19. ທ່ານຈະບໍ່ປ່ວຍເປັນໂຄວິດ-19 ຈາກການຮັບວັກຊີນ.

ວັກຊີນບໍ່ມີສານກັນບູດ. ທ່ານສາມາດເຂົ້າເບິ່ງຂໍ້ມູນເພີ່ມເຕີມກ່ຽວກັບສ່ວນປະກອບຂອງວັກຊີນໄດ້ທີ່ເວັບໄຊທ໌ຂອງ ພະແນກສາທາລະນະສຸກລັດມິນນີໂຊຕ້າ.

ຢາວັກຊີນແມ່ນຟຣີສຳລັບທຸກຄົນ. ປະກັນໄພ ແລະ ສະຖານະການເຂົ້າເມືອງບໍ່ແມ່ນປະເດັນ.

ເມື່ອທ່ານໄປຮອດສະຖານທີ່ຮັບຢາວັກຊີນ, ທ່ານຈະໄດ້ຮັບເອກະສານກ່ຽວກັບຢາວັກຊີນ. ບາງເວັບໄຊທ໌ອາດຈະບອກໃຫ້ທ່ານເຊັນຊື່ ຂອງທ່ານ ແລະ ໃຫ້ຮັບຮູ້ວ່າທ່ານໄດ້ຮັບເອກະສານ ແລະ ເຫັນດີສັກວັກຊີນ. ພະນັກງານການແພດຈະສອບຖາມຄຳຖາມຈຳນວນໜຶ່ງກັບທ່ານເພື່ອໃຫ້ແນ່ໃຈວ່າທ່ານພ້ອມແລ້ວທີ່ຈະຮັບຢາວັກຊີນ.

ຜູ້ທີ່ສັກຢາວັກຊີນໃຫ້ກັບທ່ານຈະແຈ້ງໃຫ້ທ່ານຮູ້ເມື່ອໃດທ່ານຈະມາສັກຄັ້ງທີສອງ. ຖ້າທ່ານຕ້ອງການຮັບຢາວັກຊີນແບບສັກສອງເທື່ອ, ມັນສຳຄັນຫຼາຍທີ່ທ່ານຕ້ອງໄດ້ຮັບທັງສອງຄັ້ງ, ແລະ ມັນຄວນຈະເປັນຢາຊະນິດດຽວກັນທັງສອງຄັ້ງ. ທ່ານຕ້ອງໄດ້ຖ້າເປັນເວລາສາມ ຫາ ສີ່ອາທິດກ່ອນທີ່ທ່ານຈະຮັບຄັ້ງທີສອງ.

ໃນເວລາທີ່ທ່ານຮັບຢາວັກຊີນ, ທ່ານຈະຕ້ອງລໍຖ້າທີ່ຄຣີນິກເປັນເວລາ 15 ຫາ 30 ນາທີ ເພື່ອໃຫ້ແນ່ໃຈວ່າທ່ານຈະບໍ່ມີອາການແພ້ຢາຂັ້ນຮຸນແຮງ. ທ່ານຈະໄດ້ຮັບບັດທີ່ລະບຸວັນທີ່ທ່ານໄດ້ຮັບຢາວັກຊີນ. ວັນທີນັດໝາຍຖືກລະບຸໄວ້ຢູ່ໃນບັດ, ຊຶ່ງທ່ານຈະຮູ້ວ່າເມື່ອໃດທີ່ທ່ານຈະຕ້ອງກັບຄືນມາຮັບໂດສ໌ທີສອງ.

ຫຼັງຈາກທີ່ທ່ານຮັບຢາວັກຊີນ, ທ່ານອາດຈະມີຜົນຂ້າງຄຽງເກີດຂຶ້ນ. ຜົນຂ້າງຄຽງທີ່ມັກເກີດຂຶ້ນ ລວມມີ ອາການປວດບໍລິເວນສັກຢາ, ຮູ້ສຶກເມື່ອຍ, ເຈັບຫົວ, ປວດຕົນຕົວ, ໄຂ້, ຫຼື ໜາວສັ່ນ. ຜົນຂ້າງຄຽງຈະຫາຍໄປໃນເວລາໜຶ່ງ ຫຼື ສອງວັນ. ຄວາມຮູ້ສຶກຂອງຜົນ ຂ້າງຄຽງແມ່ນປົກກະຕິ ແລະ ໝາຍເຖິງວັກຊີນແມ່ນໄດ້ຜົນດີກັບທ່ານ! ມັນບໍ່ເປັນຫຍັງຖ້າທ່ານບໍ່ຮູ້ສຶກວ່າມີຜົນຂ້າງຄຽງ. ຖ້າທ່ານມີອາການແພ້ຢ່າງຮຸນແຮງຫຼັງຈາກອອກຈາກສະຖານທີ່ຮັບວັກຊີນ, ໂທຫາ 911, ຫຼື ໄປຍັງໂຮງໝໍທີ່ໃກ້ທີ່ສຸດ.

ເຖິງແມ່ນວ່າຫຼັງຈາກໄດ້ຮັບວັກຊີນໂຄວິດ-19ແລ້ວກໍ່ຕາມ, ທ່ານຄວນທຳຕາມຂັ້ນຕອນພື້ນຖານຕໍ່ໄປເມື່ອໄດ້ຮັບການແນະນຳ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບໂຄວິດ-19, ເຂົ້າເບິ່ງ: https://health.mn.gov/covidvaccine

Minnesota Department of Health
Communications Office
PO Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

2/24/21 (Lao)

ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຫາ: 651-201-4989